ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກແລະໄຂ້ຍຸງ
ສປປ ລາວ

# ບົດບັນທຶກກອງປະຊຸມ
# ຄະນະກຳມະການປະສານງານກອງທຶນໂລກ(CCM)

ກອງປະຊຸມຄັ້ງນີ້ໄດ້ຈັດຂຶ້ນຄັ້ງທີ 03 ຂອງສົກປີ 2021 ວັນສຸກ ທີ 18 ມິຖຸນາ 2021 ເວລາ 08:30 ຫາ 12:00 ທີ່ຫ້ອງປະຊຸມຊັ້ນ 2 ໂຮງແຮມດອນຈັນພາເລດ ໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ , ປະທານອົງການກາແດງລາວ ທັງເປັນປະທານ CCM.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ : ສະມາຊິກ ແລະ ຕົວແທນຂອງ CCM ຈຳນວນ 15 ທ່ານ (ມີສິດອອກສຽງໄດ້ 14 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 21 ທ່ານ ເຊິ່ງຕາງໜ້າຈາກຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ກົມແຜນການແລະຮ່ວມມື (DPC) ກະຊວງສາທາລະນະສຸກ, ຜູ້ຕາງໜ້າຈາກ ໂຄງການ 3 ພະຍາດ, PR ຊວງສາທາລະນະສຸກ, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 35 ທ່ານໂດຍລວມທັງຜູ້ເຂົ້າຮ່ວມຜ່ານທັງອອນລາຍ.

## I. ວາລະກອງປະຊຸມ:

1. ສະເໜີຮ່າງບົດສະເໜີຂໍທຶນ C19RM 2021 ແບບຄົບຊຸດ ຕໍ່ສະມາຊິກ CCM ເພື່ອທົບທວນ ແລະ ພິຈາລະນາຮັບຮອງເອົາ;
2. ສະເໜີຂໍ້ກຳນົດດ້ານຈັນຍາບັນຂອງ CCM ສະບັບປັບປຸງໃໝ່ເພື່ອໃຫ້ສະມາຊິກ CCM ທົບທວນ ແລະ ພິຈາລະນາຮັບຮອງເອົາ;
3. ລາຍງານສະພາບ ແລະ ຄວາມຄືບໜ້າກ່ຽວກັບທຶນຊ່ວຍເຫຼືອຂອງກອງທຶນໂລກ ຊຶ່ງລວມທັງທຶນພາຍໃນປະເທດ ແລະ ທຶນພາກພື້ນ;
4. ລາຍງານສະພາບກ່ຽວກັບຂະບວນການວິວັດຂອງ CCM ແລະ ການຄັດເລືອກເອົາ 2 ຕຳແໜ່ງງານຂອງ CCM ຄື: ທີ່ປຶກສາໄລຍະສັ້ນເພື່ອຊ່ວຍຂະບວນການວິວັດຂອງ CCM ແລະ ພະນັກງານປະສານງານຂອງວຽກງານ C19RM

## 2. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ກ່ອນຈະກ້າວເຂົ້າວາລະກອງປະຊຸມ ກອງເລຂາ CCM ໄດ້ຢືນຢັນອົງປະກອບຂອງກອງປະຊຸມແມ່ນພຽງພໍ ແລະ ກໍ່ໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບກິດຈະກຳເພີ່ມເຕີມ ຂອງ CBM ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ CCM Evolution ສຳລັບສະໜັບສະໜູນກິດຈະກຳຂອງ CSO ລະດັບພາກພື້ນ ເພື່ອອົບຮົມກ່ຽວກັບເຄື່ອງມືໃນການເກັບກຳຂໍ້ມູນ ແລະ ການວິເຄາະ.

ຫຼັງຈາກ CCM ໄດ້ເລື່ອນການຮັບຮອງເອົາກິດຈະກຳ ແລະ ທຶນຊ່ວຍເຫຼືອເພີ່ມເຕີມທີ່ໄດ້ສະເໜີມານັ້ນແລ້ວ , ກອງເລຂາ CCM ກໍ່ໄດ້ຕິດຕໍ່ພົວພັນ ແລະ ຖາມ CCM Hub ຖ້າວ່າງົບປະມານທີ່ຖືກຈັດສັນໃຫ້ແກ່ CSO ພາກພື້ນສຳລັບກິດຈະກຳຝຶກອົບຮົມ CBM ນັ້ນ ສາມາດນຳໃຊ້ເຂົ້າໃນກິດຈະກຳອື່ນໆໄດ້ບໍ່ ແລະ CCM Hub ກໍ່ໄດ້ໃຫ້ຄວາມກະຈ່າງແຈ້ງວ່າງົບປະມານຈາກ CCM Evolution ນັ້ນ ເປັນການສະໜັບສະໜູນກິດຈະກຳຂອງ CBM ໂດຍສະເພາະ ແລະ ບໍ່ສາມາດນຳໃຊ້ງົບປະມານບ້ວງນີ້ເພື່ອປະຕິບັດກິດຈະກຳອື່ນໆ; CCM Hub ຍັງໄດ້ແນະນຳໃຫ້ຮັກສາງົບປະມານບ້ວງດັ່ງກ່າວໃນແຜນງົບປະມານຂອງ CCM ປະຈຸບັນ ແລະ ພາຍຫຼັງການຝຶກອົບຮົມຂອງ CSO ແລ້ວ, ຜູ້ຕາງໜ້າຈາກຊຸມຊົນໃດໜຶ່ງສາມາດຂໍທຶນຊ່ວຍເຫຼືອດັ່ງກ່າວເພື່ອປະຕິບັດກິດຈະກຳໄດ້.

**ວາລະກອງປະຊຸມທີ 1: ສະເໜີຮ່າງບົດສະເໜີຂໍທຶນ C19RM 2021 ແບບຄົບຊຸດ ຕໍ່ສະມາຊິກ CCM ເພື່ອທົບທວນ ແລະ ພິຈາລະນາຮັບຮອງເອົາ**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີຈາກຜູ້ຕາງໜ້າຂອງທີມງານວິຊາການສະເພາະກິດຂອງ CCM ກ່ຽວກັບບົດສະເໜີຂໍທຶນ C19RM 2021 ແບບຄົບຊຸດ ເພື່ອໃຫ້ສະມາຊິກ CCM ທົບທວນ ແລະ ພິຈາລະນາຮັບຮອງ. ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນ ແລະ ມີການສົນທະນາ ຊຶ່ງສັງລວມໄດ້ດັ່ງລຸ່ມນີ້:

- ກິດຈະກຳບຸລິມະສິດທີ່ໄດ້ເອົາລວມເຂົ້າໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ແມ່ນອີງໃສ່ສະພາບການລະບາດຂອງ COVID 19 ຊຶ່ງໄດ້ມີການສະເໜີບຸລິມະສິດໃນການຈັດຊື້ເຄື່ອງບົ່ງມະຕິພະຍາດ ແລະ ການປິ່ນປົວຢ່າງຮີບດ່ວນໂດຍສອດຄ່ອງກັບ 10 ເສົາຄ້ຳຂອງຍຸດທະສາດ NSPRP ສະບັບປັບປຸງໃນປະຈຸບັນ. ກ່ຽວກັບເສົາຄ້ຳທີ່ 5 ຂອງ NSPRP, ໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ກົມປິ່ນປົວ ໄດ້ສະເໜີຊື້ພາຫະນະຈຳນວນ 30,000 ໂດລາເພື່ອຕິດຕາມຊຸກຍູ້ວຽກງານພາກສະໜາມນັ້ນ ກອງປະຊຸມບໍ່ເຫັນດີກັບການສະເໜີດັ່ງກ່າວ ແລະ ແນະນຳໃຫ້ທີມງານວິຊາການທົບທວນ ແລະ ຈັດສັນງົບປະມານນີ້ເພື່ອໄປຈັດຊື້ອຸປະກອນທີ່ເຫັນວ່າມີຄວາມຈຳເປັນ ຫຼື ອາດຈະຈັດສັນງົບປະມາດັ່ງກ່າວເຂົ້າໃນກິດຈະກຳອື່ນໆ;
- ສະມາຊິກ CCM ຜູ້ທີ່ເຂົ້າຮ່ວມກອງປະຊຸມຜ່ານທາງອອນລາຍໄດ້ແນະນຳໃຫ້ລະບຸຈຸດປະສົງທີ່ຈະແຈ້ງຂອງກິດຈະກຳ ແລະ ງົບປະມານໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ເພື່ອຫລີກລ້ຽງການຊ້ຳຊ້ອນຂອງທຶນທີ່ມີຢູ່, ທຶນທີ່ກຳລັງຂໍໃໝ່ໃນປະຈຸບັນ ແລະ ແຫຼ່ງທຶນອື່ນໆທີ່ຈະສະໜັບສະໜູນໃນອະນາຄົດ;
- ທີ່ປຶກສາອາວຸໂສດ້ານວິຊາການຂອງ CHAS ໄດ້ແຈ້ງໃຫ້ກອງປະຊຸມກ່ຽວກັບຄຳຖາມ ແລະ ຄຳແນະນຳບາງຢ່າງຈາກກົມ DPC ວ່າ:
    - o ການສະເໜີຂໍທຶນຂອງ INGO ແລະ CSO ໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ຄວນຈະໄດ້ຮັບການອະນຸມັດຈາກກະຊວງການຕ່າງປະເທດ (MOFA) ຫຼື ບໍ່? ໃນນີ້, ຜູ້ຕາງໜ້າຈາກ MOFA ຈະຂໍເອົາບັນຫານີ້ໄປປຶກສາຫາລືນຳພາກສ່ວນທີ່ກ່ຽວຂ້ອງໃນກະຊວງ ແລະ ຈະແຈ້ງໃຫ້ຊາບຕາມພາຍຫຼັງ;
    - o ການໂອນເງິນຊ່ວຍເຫຼືອໃດໆຄວນຈະຜ່ານປະຕູດຽວຕາມລະບຽບຂອງກະຊວງການເງິນ;
    - o ຖ້າເປັນ INGO ກໍ່ຕ້ອງປະຕິບັດຕາມລະບຽບການຂອງ MOFA ແລະ CSO ຄວນປະຕິບັດຕາມລະບຽບຂອງ MOHA;
    - o ຍຸດທະສາດຂອງ 3 ພະຍາດ ແລະ Covid19 ຄວນສອດຄ່ອງກັບຍຸດທະສາດ ແລະ ແຜນການປະຕິຮູບຂະແໜງສາທາລະນະສຸກ;
    - o ທຶນຊ່ວຍເຫຼືອດັ່ງກ່າວ ແມ່ນຈະເອົາເພີ່ມໃສ່ບ້ວງທຶນຊ່ວຍເຫຼືອທີ່ມີຢູ່ພາຍໃນປະເທດ LAO-C-MOH.
- ໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ເຫັນວ່າຄ່າໃຊ້ຈ່າຍໃນການບໍລິຫານຂອງ CHAS ແມ່ນສູງຫຼາຍ, CHAS ຄວນເຮັດວຽກຮ່ວມກັບທີມງານຂຽນບົດດັ່ງກ່າວເພື່ອທົບທວນ ແລະ ປັບປຸງແກ້ໄຂໃຫ້ເໝາະສົມ;
- ຜູ້ຕາງໜ້າ NTC ໄດ້ລາຍງານກ່ຽວກັບທຶນຊ່ວຍເຫຼືອຄັ້ງແລ້ວນີ້ ທີ່ໄດ້ມີການຈັດຊື້ ຊຶ່ງກອງທຶນໂລກໄດ້ກຳນົດວ່າ

ສັນຍາການຈັດຊື້ໄດ້ເຊັນນອກໄລຍະເວລາການຈັດຕັ້ງປະຕິບັດ ແລະ ກອງທຶນໂລກບໍ່ສາມາດພິຈາລະນາການຈັດຊື້ດັ່ງກ່າວເປັນຂໍ້ຜູກພັນ ຫລື ພັນທະທີ່ຈະຕ້ອງຈ່າຍຕາມທີ່ PR ໄດ້ສົ່ງໜັງສືໄປຫາ GF ເພື່ອໃຫ້ຄວາມກະຈ່າງແຈ້ງ ແລະ ສະເໜີຂໍຈັດສັນກິດຈະກໍາ ແລະ ງົບປະມານຄືນໃໝ່. ອີງຕາມຄໍາແນະນໍາສຸດທ້າຍຈາກ GF, NTC ຄວນຈະເພີ່ມຈໍານວນດັ່ງກ່າວເຂົ້າໃນບົດສະເໜີຂໍທຶນ C19RM ຮອບໃໝ່.

- ກອງປະຊຸມໄດ້ເຫັນດີສະເໜີໃຫ້ກົມປິ່ນປົວຊື້ເຄື່ອງກວດ Mobile X-Ray ແທນ PSA; ໃນຂະນະດຽວກັນນີ້, ຜູ້ຕາງໜ້າກົມປິ່ນປົວຈະນໍາເອົາບັນຫານີ້ໄປປຶກສາຫາລືລະຫວ່າງຄະນະກົມຕື່ມ;
- ກອງປະຊຸມໄດ້ແນະນໍາທີມງານຂຽນບົດໃຫ້ທົບທວນຄືນ ແລະ ປັບປຸງບົດສະເໜີຂໍທຶນ C19RM ແບບຄົບຊຸດຕາມຄໍາເຫັນຂອງ RSC, AFAO ແລະ CCM;
- ຜູ້ຕາງໜ້າສະຫະພັນແມ່ຍິງ (LWU) ໄດ້ແນະນໍາກ່ຽວກັບຂັ້ນຕອນໃນການລົງຄະແນນສຽງສໍາລັບການຮັບຮອງເອກະສານສໍາຄັນຕ່າງໆຕາມເງື່ອນໄຂຂອງກອງທຶນໂລກ , ຄວນຈະຈັດກອງປະຊຸມກະກຽມເພື່ອສົນທະນາລະຫວ່າງສະມາຊິກ CCM ກ່ອນການຮັບຮອງໃນກອງປະຊຸມ CCM. ພ້ອມດຽວກັນ, ການກະກຽມເອກະສານສໍາລັບການຮັບຮອງຄວນຈະແປເປັນພາສາລາວ;
- ກອງປະຊຸມໄດ້ຕົກລົງຮັບຮອງເອົາບົດສະເໜີຂໍທຶນ C19RM ແບບຄົບຊຸດ ໂດຍການລົງຄະແນນສຽງສ່ວນຫຼາຍໂດຍພາຍໃຕ້ເງື່ອນໄຂ ແລະ ຄໍາແນະນໍາດັ່ງລຸ່ມນີ້:
  - ການຈັດສັນງົບປະມານ ແລະ ກິດຈະກໍາໂດຍລວມແມ່ນສອດຄ່ອງກັບບຸລິມະສິດແຫ່ງຊາດ ແລະ ຄູ່ມືແນະນໍາຂອງກອງທຶນໂລກ;
  - ການຈັດສັນງົບປະມານໂດຍລວມໃຫ້ທຸກໆຄູ່ຮ່ວມງານການຈັດຕັ້ງປະຕິບັດແມ່ນສົມເຫດສົມຜົນ;
  - ທີມງານວິຊາການ ແລະທີມງານຂຽນບົດຕ້ອງສືບຕໍ່ປະສານສົມທົບກັບບັນດາສູນ ແລະ ກົມທີ່ກ່ຽວຂ້ອງໂດຍສະເພາະແມ່ນກົມປິ່ນປົວ ແລະ ກົມອື່ນໆ ເພື່ອທົບທວນ ແລະ ປັບປຸງກິດຈະກໍາ ແລະ ງົບປະມານຕາມຄໍາເຫັນຂອງກອງປະຊຸມ ແລະ ຄໍາເຫັນທີ່ໄດ້ຮັບຈາກອີເມວ;
  - ຫລັງຈາກປັບປຸງບົດສະເໜີຂໍທຶນ ( FR), ທີມງານວິຊາການ ແລະ ທີມງານຂຽນບົດຕ້ອງໄດ້ສົ່ງ FR ສະບັບປັບປຸງໃໝ່ໃຫ້ກອງເລຂາ CCM ພາຍໃນວັນຈັນທີ 21 ມິຖຸນາ ຕອນທ່ຽງ. ກອງເລຂາ CCM ຈະຕ້ອງໄດ້ສົ່ງ FR ສະບັບປັບປຸງໃໝ່ໃຫ້ສະມາຊິກ CCM ທຸກຄົນເພື່ອໃຫ້ທົບທວນ ແລະ ພິຈາລະນາລົງຄະແນນສຽງແບບບໍ່ມີການຄັດຄ້ານພາຍໃນ ວັນອັງຄານທີ 22 ມິຖຸນາ ຕອນທ່ຽງ; ແລະ
  - ໃນເມື່ອບໍ່ມີການຄັດຄ້ານ ຫຼື ໄດ້ຮັບການຄັດຄ້ານໜ້ອຍກ່ວາ 2 ຈາກເຂດເລືອກຕັ້ງຕ່າງໆຕາມກໍານົດເວລາ (ອີງຕາມ CCM TOR ໃນປະຈຸບັນ), ກອງເລຂາ CCM ຈະຕ້ອງຍື່ນຮ່າງ FR ສະບັບປັບປຸງຄັ້ງສຸດທ້າຍໃຫ້ທີມງານກອງທຶນໂລກໃນຕອນບ່າຍວັນທີ 22 ມິຖຸນາ.

**ວາລະກອງປະຊຸມທີ 2: ສະເໜີຂໍ້ກໍານົດດ້ານຈັນຍາບັນຂອງ CCM ສະບັບປັບປຸງໃໝ່ເພື່ອໃຫ້ສະມາຊິກ CCM ທົບທວນ ແລະ ພິຈາລະນາຮັບຮອງເອົາ.**

ພາຍຫຼັງທີ່ໄດ້ຮັບຟັງກອງເລຂາ CCM ສະເໜີຫຼັກຈັນຍາບັນຂອງສະມາຊິກ CCM ສະບັບປັບປຸງໃໝ່ຕໍ່ກອງປະຊຸມໂດຍອີງຕາມຄໍາແນະນໍາຈາກຫ້ອງການດ້ານຈັນຍາບັນຂອງ GF ຊຶ່ງຫຼັກຈັນຍາບັນດັ່ງກ່າວນີ້ສະມາຊິກ CCM ເຄີຍໄດ້ຮັບຮອງເອົາຄັ້ງໜຶ່ງແລ້ວໃນກອງປະຊຸມ CCM ເດືອນກັນຍາ 2020. ຫຼັກຈັນຍາໄດ້ຮັບການປັບປຸງໃໝ່ໃນເດືອນກຸມພາ ປີ 2021 ແລະ ກໍ່ໄດ້ເຜີຍແຜ່ລົງໃນໜ້າເວັບໄຊທ໌ ຂອງ CCM Ethics Webpage. ສະເໜີໃຫ້ສະມາຊິກ CCM ທົບທວນ ແລະ ຢັ້ງຢືນການຮັບຮອງເອົາຫຼັກຈັນຍາສະບັບປັບປຸງຕໍ່ຫ້ອງການດ້ານຈັນຍາໂດຍການປະກອບແບບຟອມທີ່ GF ສົ່ງໃຫ້ນັ້ນຢ່າງຄົບຖ້ວນແລ້ວເຊັນຮ່ວມກັນໂດຍປະທານ ຫຼື ຮອງປະທານCCM ແລະ ຫົວໜ້າກອງເລຂາ CCM ແລ້ວສົ່ງໃຫ້ຫ້ອງການດ້ານຈັນຍາບັນຂອງ GF.

ຂໍ້ກຳນົດດ້ານຈັນຍາບັນສະບັບປັບປຸງໃໝ່ໄດ້ມີ ການປັບປຸງໃນຫົວຂໍ້ກ່ຽວກັບ **ກຽດສັກສີ ແລະ ຄວາມເຄົາລົບ ຂອງ ສະມາຊິກ CCM.**

ສະມາຊິກCCM ຄວນປະຕິບັດຕໍ່ປະຊາຊົນດ້ວຍກຽດ ແລະ ຄວາມເຄົາລົບໂດຍ:

- ການຮັບປະກັນການເຄົາລົບສິດທິມະນຸດ ລວມທັງການຈຳແນກລັງກຽດ:
  - o ຮັບປະກັນວ່າບັນດາໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກໄດ້ຖືກອອກແບບເພື່ອໃຫ້ມີຄວາມເປັນເອກະພາບ, ສົ່ງເສີມກຽດສັກສີ, ຄວາມເຄົາລົບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກເຊື້ອ HIV, ວັນນະໂລກ ແລະ ໄຂ້ຍຸງ, ລວມທັງປະຊາກອນທີ່ຫຼັກທີ່ມີຄວາມສ່ຽງ;
  - o ສະມາຊິກ CCM ແບ່ງປັນຄວາມຮັບຜິດຊອບໃນການສະກັດກັ້ນ, ປ້ອງກັນ ແລະ ຕອບໂຕ້ກັບການລົບກວນ ແລະ ການໃຊ້ອຳນາດ, ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດລວມທັງກິດຈະກຳການລ່ວງລະເມີດທາງເພດກັບເດັກທີ່ໄດ້ລະບຸໄວ້ໃນໂຄງການກອງທຶນໂລກ.
- ການຮັບປະກັນບັນຍາກາດແຫ່ງຄວາມເຄົາລົບເຊິ່ງກັນແລະກັນ:
  - o ໃນການພົວພັນກັບສະມາຊິກ CCM, ຜູ້ຈັດຕັ້ງປະຕິບັດ ແລະ ພະນັກງານກອງທຶນໂລກ, ສະມາຊິກ CCM ຄາດວ່າຈະຮັກສາສະພາບແວດລ້ອມທີ່ເອື້ອອຳນວຍສະດວກໃຫ້ທັງສອງຝ່າຍໂດຍການໃຫ້ຄວາມເຄົາລົບເຊິ່ງກັນແລະກັນ;
  - o ງົດເວັ້ນຈາກການຂົ່ມເຫັງ, ການລົບກວນທຸກຮູບແບບ (ລວມທັງການລ່ວງລະເມີດທາງເພດ) , ການຈຳແນກລັງກຽດ ແລະ ການສວຍໃຊ້ອຳນາດຂອງພວກເຂົາ.
- ຫຼັງການການສະເໜີຂອງກອງເລຂາ ກອງປະຊຸມບໍ່ໄດ້ມີຄຳເຫັນເພີ່ມເຕີມ ແລະ ສະມາຊິກ CCM ຜູ້ເຂົ້າຮ່ວມກອງປະຊຸມທັງໝົດໄດ້ຕົກລົງຮັບຮອງເອົາຫຼັກຈັນຍາບັນຂອງສະມາຊິກ CCM ສະບັບປັບປຸງໃໝ່;

**ວາລະກອງປະຊຸມທີ 3: ລາຍງານສະພາບແລະຄວາມຄືບໜ້າກ່ຽວກັບທຶນຊ່ວຍເຫຼືອຂອງກອງທຶນໂລກ ຊຶ່ງລວມທັງທຶນພາຍໃນປະເທດ ແລະ ທຶນພາກພື້ນ.**

## ໂຄງການ RAI3E

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າ UNOPS ໄດ້ລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກສຳລັບ ໂຄງການ RAI3E ຮອບປະຈຸບັນ ແລະ ຮອບຕໍ່ໄປເຂົ້າໃນແຜນງານ ຄວບຄຸມແລະລົບລ້າງໄຂ້ມະລາເຣຍ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນແລະມີການສົນທະນາ ຊຶ່ງສັງລວມໄດ້ດັ່ງລຸ່ມນີ້:

- ຂັ້ນຕອນການໂອນເງິນແມ່ນໃຊ້ເວລາດົນ ແລະ ເຮັດໃຫ້ມີການຊັກຊ້າໃນການຈັດຕັ້ງປະຕິບັດກິດຈະກຳ ; ຂັ້ນຕອນດັ່ງກ່າວຄວນຈະໄດ້ປັບປຸງໃຫ້ໄວກວ່ານີ້ ໂດຍອີງຕາມລະບຽບການເງິນຂອງກະຊວງການເງິນ;
- ຜູ້ຕາງໜ້າຈາກກະຊວງການເງິນໄດ້ໃຫ້ຄຳແນະນຳກ່ຽວກັບການໂອນເງິນຊ່ວຍເຫຼືອຕ້ອງໄດ້ໂອນເຂົ້າຜ່ານປະຕູດຽວ ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຕິດຕາມ. ພ້ອມດຽວກັນນີ້, ຖ້າຫາກມີຂັ້ນຕອນຊັກຊ້າໃດໆທີ່ກ່ຽວຂ້ອງ, ໃນນາມສະມາຊິກ CCM ຕາງໜ້າຈາກ MOF ຍິນດີທີ່ຈະໃຫ້ການຮ່ວມມືອຳນວຍຄວາມສະດວກກ່ຽວກັບຂັ້ນຕອນການເບີກຈ່າຍເງິນໃຫ້ໄວຂຶ້ນ;
- ຜູ້ຕາງໜ້າຈາກກົມ DPC ໄດ້ຕັ້ງຄຳຖາມກ່ຽວກັບເປີເຊັນຜົນສຳເລັດຂອງການຈັດຕັ້ງປະຕິບັດກິດຈະກຳ ແຕ່ເດືອນມັງກອນ ຫາ ພຶດສະພາ 2021 ແລະ ຈຳນວນເງິນທີ່ໄດ້ປະກອບສ່ວນຂອງລັດຖະບານ ; ກ່ຽວກັບເລື່ອງນີ້, ສະເໜີໃຫ້ UNOPS ສົ່ງເອກະສານດັ່ງກ່າວໃຫ້ DPC ເພື່ອຄວາມກະຈ່າງແຈ້ງ. ຜູ້ຕາງໜ້າອົງການ UNOPS ໄດ້ຕອບວ່າອີງຕາມຂໍ້ມູນທີ່ໄດ້ຮັບຈາກຄູ່ຮ່ວມງານ MOH, ຈຳນວນທຶນສົມທົບຂອງລັດຖະບານປີ 2021 ໄດ້ຮັບການອະນຸມັດຈາກ MoPI ແລ້ວ ແລະ ກໍ່ໄດ້ເລີ່ມດຳເນີນການຈັດຊື້ LLINs.

ແຜນງານຕ້ານເຮສໄອວີ ແລະ ຄວບຄຸມວັນນະໂລກ

1. **ຜູ້ຕາງໜ້າໂຄງການຕ້ານເອດ ແລະ ວັນນະໂລກໄດ້ລາຍງານສະພາບຄວາມຄືບໜ້າ** ຫຼັງຈາກທີ່ໄດ້ຮັບໜັງສືແຈ້ງການຈັດຕັ້ງປະຕິບັດຈາກ GF ກ່ຽວກັບທຶນຊ່ວຍເຫຼືອໃນ ຮອບຜ່ານມາຂອງ ແຜນງານ LAO-H-GFMOH ແລະ LAO-T-GFMOH ກ່ຽວກັບ ການຈັດຊື້ ຊຶ່ງກອງທຶນໂລກໄດ້ກຳນົດວ່າສັນຍາການຈັດຊື້ໄດ້ເຊັນນອກໄລຍະເວລາການຈັດຕັ້ງປະຕິບັດ ແລະ ກອງທຶນໂລກບໍ່ສາມາດພິຈາລະນາການຈັດຊື້ດັ່ງກ່າວເປັນຂໍ້ຜູກພັນ ຫລື ພັນທະທີ່ຈະຕ້ອງຈ່າຍ. ກອງທຶນໂລກໄດ້ໃຫ້ຄາແນະນາດັ່ງລຸ່ມນີ້:
   - ໃຫ້ໂຄງການLAO-H-GFMOH ແລະ LAO-T-GFMOH ຕ້ອງສົ່ງເງິນຄືນໃຫ້ກອງທຶນໂລກຈຳນວນ 407,566 ໂດລາສະຫະລັດພາຍໃນ 60 ວັນ; ຖ້າກອງທຶນໂລກບໍ່ໄດ້ຮັບເງິນພາຍໃນ 60 ວັນ, ກອງທຶນໂລກຈະສົ່ງໜັງສືເປັນທາງການເພື່ອຂໍເງິນຈ່າຍຄືນພ້ອມລາຍລະອຽດຂອງທະນາຄານ;
   - ເພີ້ມຈຳນວນເງິນດັ່ງກ່າວເຂົ້າໃນ ບົດສະເໜີຂໍທຶນ C19RM 2021 ທີ່ມີການພົວພັນກັບການຕອບໂຕ້ພະຍາດ Covid-19 ແຫ່ງຊາດ. ຖ້າ PR ໄດ້ຕັດສິນໃຈທາງເລືອກນີ້, ສິ່ງສຳຄັນຕ້ອງໃຫ້ຄວາມກະຈ່າງແຈ້ງວ່າບ້ວງເງິນຂອງ (HIV- 4 BL; TB 9 BL) ແມ່ນມີຄວາມກ່ຽວພັນກັບ ບົດສະເໜີຂໍທຶນC19RM 2021. ແຕ່ເຖິງຢ່າງໃດ ກອງທຶນໂລກກໍຈະບໍ່ສາມາດຮັບປະກັນວ່າບົດສະເໜີນີ້ຈະຖືກອະນຸມັດ.
   - ຫຼັງຈາກ PR ໄດ້ສົ່ງໜັງສືໄປຫາ GF ເພື່ອສະເໜີຂໍຈັດສັນກິດຈະກໍາ ແລະ ງົບປະມານຄືນໃໝ່, ກອງທຶນໂລກໄດ້ໃຫ້ ຄຳແນະນຳສຸດທ້າຍ ວ່າຄວນຈະເພີ່ມຈຳນວນດັ່ງກ່າວເຂົ້າໃນບົດສະເໜີຂໍທຶນ C19RM ຮອບໃໝ່.

2. **ຈາກນັ້ນ ຜູ້ຕາງໜ້າໂຄງການຕ້ານເອດໄດ້ສືບຕໍ່ລາຍງານສະພາບຄວາມຄືບໜ້າກ່ຽວກັບໂຄງການຊ່ວຍເຫຼືອທຶນຕ້ານເອດພາກພື້ນ** SKPA-2 ໂດຍສັງລວມຈຸດສຳຄັນດັ່ງລຸ່ມນີ້:

**ຈຸດປະສົງຂອງໂຄງການ ໃນ ສປປລາວ**
- ຮັບປະກັນຂໍ້ມູນຂ່າວສານດ້ານຍຸດທະສາດເພື່ອອອກແບບໂຄງການ;
- ສົ່ງເສີມ ແລະ ຂະຫຍາຍການເຂົ້າເຖິງການກວດຫາເຊື້ອໃນຊຸມຊົນ, ການກວດຫາເຊື້ອດ້ວຍຕົນເອງ ແລະ PrEP;
- ເພີ່ມແຫ່ງ mbo ພາຍໃນເພື່ອສະໜັບສະໜູນການຫັນປ່ຽນ ແລະ ຄວາມຍືນຍົງ;
- ການສ້າງຄວາມຮຽກຮ້ອງຕ້ອງການ ແລະ ການໃຫ້ທິດທາງການບໍລິການຄືນໃໝ່ ເພື່ອເພີ່ມທະວີການຮັກສາ ແລະ ຫຼຸດຜ່ອນຄົນເຈັບຂາດການຕິດຕາມ;
- ສ້າງຂໍ້ມູນຍຸດທະສາດ ສໍາລັບ PWID, TG ແລະ ແມ່ຍິງທີ່ມີຄວາມສ່ຽງຕໍ່າເພື່ອການວາງແຜນ.

**ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໂດຍ CHias**
- ຝຶກອົບຮົມການໃຫ້ຄຳປຶກສາດ້ານການຕິດຕາມ ໃນຊຸມຊົນ ( CBM) ໃນແຂວງຄຳມ່ວນ ແລະ ນະຄອນຫຼວງວຽງຈັນ;
- ຝຶກອົບຮົມກ່ຽວກັບການຈຳແນກ ແລະ ລັງກຽດ ໃຫ້ແກ່ພະນັກງານແພດ ແລະ ຜູ້ສະໜັບສະໜູນເພື່ອນຮ່ວມງານ;
- ສ້າງແຜນວຽກ ແລະ ງົບປະມານລະອຽດກັບ APCOM;
- ສົນທະນາກຸ່ມສຸມໃສ່ MSM / TG (FGD) ກ່ຽວກັບຄວາມຮຽກຮ້ອງຕ້ອງການຂອງຊຸມຊົນ;
- PrEP ແລະ ກວດຫາເຊື້ອHIVSTໂດຍ (Oral Quick) ເພື່ອໃຫ້ກວມເອົາ 216 MSM / TG;
- ກະກຽມປະເມີນຜົນແບບໄວໃນກຸ່ມສັກຢາເສບຕິດ (PWID) ໃນປີ 2021 ດ້ວຍງົບປະມານ 85,000

ໂດລາ ຈາກ AFAO ແລະ 117,000 ເອີຣົບ ຈາກ ຝຣັ່ງເສດ 5% ລິເລີ່ມ.

**ຜູ້ຮັບທຶນຍ່ອຍ**

- ສູນຕ້ານເອດ ແລະ ພຕພ
- ສະມາຄົມ CHias

**ງົບປະມານ**

- Y1 (2019) - ງົບປະມານທີ່ວາງແຜນໄວ້ 194,257 ໂດລາ ແລະ ໄດ້ນຳໃຊ້ປະມານ 23,266 ໂດລາ
- Y2 (2020) - ງົບປະມານທີ່ວາງແຜນໄວ້ 617,628 ໂດລາ ແລະ ໄດ້ນຳໃຊ້ປະມານ172,184 ໂດລາ
- Y3 (2021) - ໄດ້ຈັດສັນງົບປະມານຄືນໃໝ່?

**ຄຳເຫັນສຳຄັນຈາກກອງປະຊຸມ**

- ການລາຍງານເຫັນວ່າຈະແຈ້ງ ແລະ ຜູ້ເຂົ້າຮ່ວມໃນກອງປະຊຸມບໍ່ໄດ້ປະກອບຄຳເຫັນອີກຕໍ່ກັບຫົວຂໍ້ນີ້.

3. **ຜູ້ຕາງໜ້າໂຄງການວັນນະໂລກ ໄດ້ລາຍງານຄວາມຄືບໜ້າ ກ່ຽວກັບທຶນຊ່ວຍເຫລືອໃນພາກພື້ນ ຂອງແຜນງານວັນນະໂລກ - TEAM-2 (MC2) ແລະ ບົດສະເໜີຂໍທຶນ TEAM-C19RM** ເຊິ່ງສະຫຼຸບສັງລວມໄດ້ດັ່ງລຸ່ມນີ້:
   - ພື້ນທີ່ເປົ້າໝາຍສຳລັບຂົງເຂດວັນນະໂລກ ລວມມີ 8 ແຂວງ ໃນ ສປປ ລາວ ເຊັ່ນ: ຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ, ນະຄອນຫຼວງວຽງ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື;
   - ສປປ ລາວ ໄດ້ຂໍທຶນພາກພື້ນຂອງແຜນງານວັນນະໂລກ (MC2) ໃນບ້ວງທີ່ໄດ້ຈັດສັນ ( allocation request) ຈຳນວນ 834,766US$ ແລະ MC2 PAAR944,384US$
   - ສຳລັບທຶນຊ່ວຍເຫຼືອ Covid-19RM ສຳລັບຜູ້ອິບພະຍົບ TB ໃນ GMS(TEAM C19RM) ກອງທຶນໂລກໄດ້ຈັດສັນທຶນຊ່ວຍເຫຼືອເຊິ່ງມີມູນຄ່າເຖິງ 2,5 ລ້ານໂດລາ, ໂດຍມີຈຸດປະສົງເພື່ອແກ້ໄຂຜົນກະທົບຂອງສອງພະຍາດ( COVID-19) ແລະ ວັນນະໂລກກ່ຽວກັບການດູແລສຸຂະພາບ ແລະ ການບໍລິການສຸຂະພາບຊຸມຊົນ ກ່ຽວກັບເຮສໄອວີ ແລະ ວັນນະໂລກໃນບັນດາຜູ້ອົບພະຍົບ ແລະ ປະຊາກອນເຄື່ອນຍ້າຍ ( MMPs) ໃນເຂດອະນຸພາກພື້ນແມ່ນໍ້າຂອງ (ກຳປູເຈຍ , ລາວ, ພະມ້າ, ໄທ ແລະ ຫວຽດນາມ); ສຳລັບແຕ່ລະປະເທດ ຈະໄດ້: ທຶນຈັດສັນໂດຍພື້ນຖານ = 225,000 ໂດລາ ແລະ ທຶນຈັດສັນເພີ່ມເຕີມ = 225,000 ໂດລາ

**ຄຳເຫັນສຳຄັນຈາກກອງປະຊຸມ**

- ການລາຍງານເຫັນວ່າຈະແຈ້ງແລະຜູ້ເຂົ້າຮ່ວມໃນກອງປະຊຸມບໍ່ໄດ້ປະກອບຄຳເຫັນອີກຕໍ່ກັບຫົວຂໍ້ນີ້ , ແຕ່ໄດ້ມີບາງຄຳແນະນຳເພີ່ມເຕີມວ່າ NTC ຄວນກວດກາຄືນຢ່າງລະອຽດ ເພື່ອຫລີກລ້ຽງການຈັດຕັ້ງປະຕິບັດກິດຈະກຳຊໍ້າຊ້ອນກັນ; ສ້າງຄວາມເຂັ້ມແຂງໃນການປະສານງານກັບບັນດາແຂວງທີ່ກ່ຽວຂ້ອງ ຕະຫຼອດເຖິງການປະຕິບັດກິດຈະກຳຕ່າງໆແຂວງຕ້ອງໄດ້ຮັບຮູ້ນຳ.

**ວາລະກອງປະຊຸມທີ 4: ລາຍງານສະພາບກ່ຽວກັບຂະບວນການວິວັດຂອງ CCM ແລະ ການຄັດເລືອກເອົາ 2 ຕຳແໜ່ງງານຂອງ CCM ຄື: ທີ່ປຶກສາໄລຍະສັ້ນເພື່ອຊ່ວຍຂະບວນການວິວັດຂອງ CCM ແລະ ພະນັກງານປະສານງານຂອງວຽກງານ C19RM.**

ກອງເລຂາ CCM ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະຖານະພາບຂະບວນການວິວັດ CCM ແລະ ການຮັບສະໝັກພະນັກງານສອງຕຳແໜ່ງ ເຊັ່ນ: ທີ່ປຶກສາໄລຍະສັ້ນເພື່ອຊ່ວຍຂະບວນການວິວັດຂອງ CCM ແລະ ຜູ້ປະສານງານວຽກງານ C19RM.

ການຮັບສະໝັກເອົາ ຕໍາແໜ່ງຜູ້ປະສານງານວຽກງານ C19RM ແມ່ນໄດ້ເລີ່ມຕົ້ນດ້ວຍການປັບປຸງພາລະບົດບາດ (ToRs) ຂອງ C19RM, ໂຄສະນາຜ່ານເວັບໄຊທ໌108 job, ເຄືອຂ່າຍ ແລະ ເວບໄຊທ໌ CCM ເປັນເວລາ 2 ອາທິດ ຫຼັງຈາກນັ້ນກອງເລຂາ CCM ໄດ້ຄັດເລືອກຜູ້ສະໝັກເພື່ອເຂົ້າສໍາພາດ.

ຄະນະກໍາມະການສໍາພາດກໍ່ໄດ້ມີແບບຟອມຄໍາຖາມ, ມີໃບຄະແນນ, ຕາຕະລາງສະຫຼຸບສັງລວມການຄັດເລືອກຜູ້ສະໝັກ, ຊີວະປະຫວັດຂອງຜູ້ສະໝັກ ແລະ ເອກະສານເພີ່ມເຕີມ. ການສໍາພາດໄດ້ດໍາເນີນຢູ່ຫ້ອງປະຊຸມກອງເລຂາ CCM, ກະຊວງສາທາລະນະສຸກ.

ຫຼັງຈາກການສໍາພາດ, ຄະນະສໍາພາດໄດ້ສັງເກດເຫັນຄວາມແຕກຕ່າງເລັກນ້ອຍໃນຄະແນນຂອງຜູ້ສະໝັກ 3 ທ່ານ ເຊິ່ງມີພື້ນຖານທາງວິຊາການ ແລະ ຄວາມຮູ້, ປະສົບການການເຮັດວຽກ, ທັກສະການບໍລິຫານ ຄຸ້ມຄອງ ແລະ ຄວາມຄາດຫວັງ. ຜູ້ສະໝັກບາງຄົນມີພື້ນຖານການສຶກສາ ແລະ ມີປະສົບການໃນການເຮັດວຽກທີ່ດີແຕ່ມີຄວາມຄາດຫວັງທາງດ້ານເງິນເດືອນ ແລະ ຜົນປະໂຫຍດເພີ່ມເຕີມ. ສຸດທ້າຍ, ຄະນະສໍາພາດໄດ້ເຫັນວ່າ ທ່ານພູວິຈິດ ຊຶງມີໄຊ ມີຄວາມຮູ້ ແລະ ປະສົບການທີ່ເໝາະສົມສໍາລັບຕໍາແໜ່ງຜູ້ປະສານງານ C19RM. ລາວມີຄວາມຄາດຫວັງທີ່ສົມເຫດສົມຜົນກ່ຽວກັບລະດັບເງິນເດືອນ ແລະ ຜົນປະໂຫຍດອື່ນໆ. ນອກຈາກນັ້ນ, ລາວຍັງເຄີຍເຮັດວຽກຮ່ວມກັບກອງເລຂາ CCM ເປັນເວລາສອງປີໃນຖານະເປັນຜູ້ຊ່ວຍດ້ານວິຊາການ ( TA) ສະໜັບສະໜູນວຽກງານກວດກາຂອງ CCM, ການສ້າງຂີດຄວາມສາມາດຂອງ CCM ແລະ ປັບປຸງການມີສ່ວນຮ່ວມຂອງຂົງເຂດຄູ່ຮ່ວມງານ.

ອີງຕາມ CCM TOR, ກອງເລຂາ CCM ໄດ້ສົ່ງບົດລາຍງານດັ່ງກ່າວໃຫ້ຄະນະກາມະການບໍລິຫານ (Ex Com) ເພື່ອພິຈາລະນາຮັບຮອງເອົາບົດລາຍງານການຮັບສະໝັກພະນັກງານຜ່ານທາງອີເມວ ແລະ ໄດ້ຮັບອະນຸມັດ ຈາກ Ex Com.

ສໍາລັບຕໍາແໜ່ງທີ່ປຶກສາໄລຍະສັ້ນເພື່ອຊ່ວຍຂະບວນການວິວັດຂອງ CCM ແມ່ນກໍາລັງດໍາເນີນຂັ້ນຕອນການຮັບສະໝັກແບບດຽວກັນກັບການຮັບສະໝັກພະນັກງານປະສານງານຂອງວຽກງານ C19RM ແລະ ຕໍາແໜ່ງດັ່ງກ່າວຈະຖືກວ່າຈ້າງງານພາຍໃນເດືອນກໍລະກົດ 2021.

ຜູ້ເຂົ້າຮ່ວມໃນກອງປະຊຸມບໍ່ມີຄໍາເຫັນເພີ່ມເຕີມຕໍ່ກັບຫົວຂໍ້ນີ້ ແລະ ກອງເລຂາ CCM ກໍ່ໄດ້ແຈ້ງຕໍ່ກອງປະຊຸມວ່າ ຕໍາແໜ່ງຜູ້ປະສານງານ C19RM ຈະເລີ່ມເຮັດສັນຍາເຂົ້າເຮັດວຽກຢູ່ກອງເລຂາ CCM ໃນໄວໆນີ້.

**ບັນຫາອື່ນໆ ແລະ ປິດກອງປະຊຸມ**

ກ່ອນຈະປິດກອງປະຊຸມ ທ່ານ ປະທານ CCM ໄດ້ສະຫຼຸບປະເດັນສາຄັນ ແລະ ໃຫ້ຄໍາແນະນໍາດັ່ງລຸ່ມນີ້:

1. ກອງປະຊຸມໄດ້ຕົກລົງເຫັນດີ ໂດຍສຽງສ່ວນຫຼາຍຮັບຮອງເອົາບົດສະເໜີຂໍທຶນ C19RM ແບບຄົບຊຸດ ພາຍໃຕ້ເງື່ອນໄຂ ແລະ ຂໍ້ສະເໜີແນະດັ່ງນີ້:
   - ກິດຈະກໍາ ແລະ ການຈັດສັນງົບປະມານໂດຍລວມແມ່ນສອດຄ່ອງກັບບຸລິມະສິດແຫ່ງຊາດ ແລະ ແນວທາງຂອງກອງທຶນໂລກ;
   - ການຈັດສັນງົບປະມານໂດຍລວມ ສໍາລັບບັນດາຄູ່ຮ່ວມງານທຸກພາກສ່ວນທີ່ຈະເຂົ້າຮ່ວມ ໃນການນໍາໃຊ້ທຶນແມ່ນສົມເຫດສົມຜົນ;
   - ທີມງານວິຊາການ ແລະ ທີມງານຂຽນຕ້ອງສືບຕໍ່ປະສານສົມທົບກັບບັນດາໂຄງການແລະ ກົມກອງທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນກົມປິ່ນປົວ ແລະ ພາກສ່ວນອື່ນໆເພື່ອທົບທວນ ແລະ ປັບປຸງກິດຈະກໍາ ແລະງົບປະມານຂອງຕົນຕາມຄໍາເຫັນຂອງກອງປະຊຸມ ແລະ ໄດ້ຮັບຈາກອີເມວ;
   - ຫລັງຈາກປັບປຸງບົດສະເໜີຂໍທຶນແລ້ວ, ທີມງານວິຊາການ ແລະ ທີມງານຂຽນຕ້ອງໄດ້ສົ່ງບົດສະເໜີຂໍທຶນທີ່

ຖືກປັບປຸງໃໝ່ໃຫ້ກອງເລຂາ CCM ພາຍໃນຕອນທ່ຽງ ວັນຈັນທີ 21 ມິຖຸນາ. ກອງເລຂາ CCM ຈະສົ່ງບົດສະເໜີຂໍທຶນທີ່ຖືກປັບປຸງໃຫ້ສະມາຊິກ CCM ທຸກທ່ານ ເພື່ອຂໍໃຫ້ທົບທວນ ແລະ ພິຈາລະນາ ໂດຍການລົງຄະແນນສຽງແບບບໍ່ມີການຄັດຄ້ານ ພາຍໃນຕອນທ່ຽງວັນອັງຄານທີ 22 ມິຖຸນາ; ແລະ

- ຖ້າບໍ່ໄດ້ຮັບການຄັດຄ້ານຫຼືໄດ້ຮັບການຄັດຄ້ານໜ້ອຍ ກ່ວາ 2 ເຂດຈາກເຂດເລືອກຕັ້ງທີ່ຕ່າງກັນ ຕາມກຳນົດເວລາ (ອີງຕາມ CCM TOR ໃນປະຈຸບັນ), ໃຫ້ກອງເລຂາ CCM ຍື່ນຮ່າງບົດສະເໜີຂໍທຶນສະບັບສຸດທ້າຍ ໃຫ້ທີມງານຂອງກອງທຶນໂລກໃນຕອນບ່າຍວັນທີ 22 ມິຖຸນາ.
- ສ່ວນບັນຫາຕິດພັນກັບບົດສະເໜີຂໍທຶນ C19RM 2021 ແມ່ນໃຫ້ປະສານງານກັບກະຊວງ MOFA ກະຊວງ MOHA ເຊັ່ນການຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ຂອງ CSO ແລະ INGO.

2. ກອງປະຊຸມໄດ້ຕົກລົງເຫັນດີຮັບຮອງເອົາຫຼັກຈັນຍາບັນຂອງ CCM ສະບັບປັບປຸງໃໝ່ເນື່ອງຈາກວ່າຫົວຂໍ້ກ່ຽວກັບການປັບປຸງນັ້ນ ແມ່ນສອດຄ່ອງກັບລະບຽບການ ແລະ ກົດໝາຍຂອງ ສປປ ລາວ ທີ່ຄົນລາວທຸກຄົນຈະຕ້ອງໄດ້ປະຕິບັດ;
3. ກ່ຽວກັບການລາຍງານສະພາບແລະຄວາມຄືບໜ້າຂອງການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກ ຊຶ່ງລວມທັງທຶນພາຍໃນປະເທດ ແລະ ທຶນພາກພື້ນ; ອີງຕາມການລາຍງານຈາກຜູ້ຕາງ UNOPS, CHAS ແລະ NTC ເຊັ່ນການຈັດຕັ້ງປະຕິບັດວຽກງານຂອງ UNOPS, ການຂໍທຶນ SKPA-2 ຂອງ CHAS ແລະ ບົດສະເໜີຂໍທຶນຊ່ວຍເຫລືອໃນພາກພື້ນ - TEAM-2 ແລະ TEAM-C19RM ຂອງ NTC ນັ້ນ, ສະເໜີໃຫ້ເບິ່ງຄືນບ້ອງທຶນສົມທົບຂອງລັດຖະບານ (Government Co-Financing) ວ່າ ໃນປີ 2021-2022 ໄດ້ມີຂະບວນການດຳເນີນໄປຄືແນວໃດ ເນື່ອງຈາກວ່າຜູ້ຕາງໜ້າຈາກກົມ DPC ແລະ DOF ຂອງກະຊວງ MOH ຍັງບໍ່ທັນໄດ້ຮັບຮູ້ນຳ ແລະ ເລື່ອງການໂອນເງິນ (Fund Flow) ແມ່ນໃຫ້ປະສານງານກັບກົມ DOF ພາຍໃນກະຊວງ MOH ຫຼື ກະຊວງ MOF ວ່າຈະມີວິການແກ້ໄຂແນວໃດ. ພ້ອມດຽວກັນນີ້, ສະເໜີໃຫ້ຜູ້ຮັບຜິດຊອບການຂໍທຶນພາກພື້ນໂດຍສະເພາະແມ່ນ NTC ກວດກາຄືນໃນບົດສະເໜີຂໍທຶນ C19RM 2021 ເພື່ອຫຼີກລ້ຽງບໍ່ໃຫ້ມີການປະຕິບັດກິດຈະກຳຊໍ້າຊ້ອນກັນ ແລະ ໃຫ້ປັບປຸງຕາມຄຳເຫັນຈາກ RCM, AFAO ແລະ ຄຳເຫັນແນະນຳຈາກກອງປະຊຸມ CCM;
4. ກອງປະຊຸມໄດ້ຕົກລົງເຫັນດີຕາມການລາຍງານສະພາບກ່ຽວກັບຂະບວນການວິວັດຂອງ CCM ແລະ ການຄັດເລືອກເອົາ 2 ຕຳແໜ່ງງານຂອງ CCM ຄື: ເຫັນດີຮັບເອົາພະນັກງານປະສານງານວຽກງານ C19RM. ສ່ວນຕຳແໜ່ງທີ່ປຶກສາໄລຍະສັ້ນເພື່ອຊ່ວຍຂະບວນການວິວັດຂອງ CCM ນັ້ນແມ່ນໃຫ້ສືບຕໍ່ປະກາດຮັບສະໝັກ, ສຳພາດ ແລະ ຄັດເລືອກຕາມລະບຽບການຂອງກອງທຶນໂລກ.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດໃນເວລາ 12:30 ຂອງວັນທີ 18 ມິຖຸນາ 2021.

ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2021

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພູທອນ ເມືອງປາກ
ປະທານອົງການກາແດງລາວ,
ປະທານຄະນະກຳມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາຄະນະກຳມະການປະສານງານກອງທຶນໂລກ